ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

-----=== 000 ===-----

ຄະນະກຳມະການຄຸ້ມຄອງຫຼັກຊັບ

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ເລກທີ 52 /ສຄຄຊ

ນະຄອນຫຼວງວຽງຈັນ, ວັນທີ 02 JUL 2020

# ແຈ້ງການ

**ເຖິງ:** ບໍລິສັດຫຼັກຊັບ ທີ່ມີຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ.

**ເລື່ອງ:** ການຄຸ້ມຄອງຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ.

- ອີງຕາມກົດໝາຍວ່າດ້ວຍຫຼັກຊັບ (ສະບັບປັບປຸງ) ສະບັບເລກທີ 79/ສພຊ, ລົງວັນທີ 3 ທັນວາ 2019.

ສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ (ສຄຄຊ) ຂໍຖືເປັນກຽດແຈ້ງມາຍັງທ່ານຊາບວ່າ ໃນໄລຍະຜ່ານມາ ສຄຄຊ ໄດ້ອະນຸຍາດໃຫ້ພະນັກງານຂອງບໍລິສັດຫຼັກຊັບຈຳນວນໜຶ່ງ ເປັນຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຕາມການສະເໜີຂອງບໍລິສັດຫຼັກຊັບ ເນື່ອງຈາກ ມີນາຍໜ້າຊື້ ຂາຍຫຼັກຊັບ ໃນຈຳນວນຈຳກັດ. ສະນັ້ນ, ເພື່ອເປັນບ່ອນອີງໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການເຄື່ອນໄຫວຂອງ ຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບດັ່ງກ່າວ ສຄຄຊ ຈຶ່ງໄດ້ອອກແຈ້ງການມາຍັງບໍລິສັດຫຼັກຊັບ ລາຍລະອຽດມີດັ່ງນີ້:

1. ເງື່ອນໄຂຜູ້ທີ່ຈະຂໍອະນຸຍາດເປັນ ຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຕ້ອງໄດ້ຜ່ານການຮຽນຫຼັກສູດວິຊາຊີບທຸລະກິດຫຼັກຊັບໃນລະດັບ 1 (Level 1) ແຕ່ສອບເສັງບໍ່ຜ່ານ, ຕ້ອງມີປະສົບການໃນການເຮັດວຽກຢູ່ບໍລິສັດຫຼັກຊັບໃດໜຶ່ງມາແລ້ວ ຢ່າງໜ້ອຍ ໜຶ່ງປີ ແລະ ຕ້ອງມີເງື່ອນໄຂອື່ນຕາມທີ່ໄດ້ກຳນົດໄວ້ໃນ ລະບຽບວ່າດ້ວຍການຄຸ້ມຄອງນັກວິຊາ ຊີບທຸລະກິດຫຼັກຊັບ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.
2. ໄລຍະເວລາຂອງການອະນຸຍາດໃຫ້ເປັນ ຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ແມ່ນບໍ່ເກີນ ໜຶ່ງປີ. ຜູ້ທີ່ມີຈຸດປະສົງໃນການສະເໜີຂໍຕໍ່ອາຍຸການເປັນຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຕ້ອງສະເໜີຕໍ່ ສຄຄຊ ຢ່າງໜ້ອຍ ສາມສິບວັນກ່ອນວັນໝົດອາຍຸການເປັນຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ. ຖ້າກາຍກຳນົດເວລາດັ່ງກ່າວ ສຄຄຊ ຈະບໍ່ພິຈາລະນາການຕໍ່ອາຍຸການເປັນຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ.
3. ຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຕ້ອງປະຕິບັດຕາມຫຼັກຈັນຍາບັນ, ສິດ, ໜ້າທີ່ ແລະ ຂໍ້ຫ້າມ ຄືກັນກັບ ຜູ້ທີ່ເຮັດໜ້າທີ່ເປັນນາຍໜ້າຊື້ ຂາຍຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ລະບຽບວ່າດ້ວຍການຄຸ້ມຄອງນັກວິຊາຊີບທຸລະກິດຫຼັກຊັບ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ.
4. ບໍລິສັດຫຼັກຊັບ ທີ່ມີຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຕ້ອງມອບໃຫ້ຜູ້ທີ່ເຮັດໜ້າທີ່ເປັນນາຍໜ້າຊື້ ຂາຍຫຼັກຊັບ ຕິດຕາມ ແລະ ເປັນທີ່ປຶກສາໃຫ້ແກ່ ຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຄື: ນາຍໜ້າຊື້ ຂາຍຫຼັກຊັບ ໜຶ່ງຄົນ ຕໍ່ຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ສອງຄົນ. ກໍລະນີຈຳເປັນ, ອາດຈະເກີນ ສອງຄົນ ກໍໄດ້.
5. ນາຍໜ້າຊື້ ຂາຍຫຼັກຊັບ ຕ້ອງເອົາໃຈໃສ່ໃນການຕິດຕາມການປະຕິບັດຕາມຫຼັກຈັນຍາບັນ, ສິດ, ໜ້າທີ່ ແລະ ຂໍ້ຫ້າມ ຂອງ ຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ລະບຽບວ່າດ້ວຍການຄຸ້ມຄອງນັກວິຊາ

ຊີບທຸລະກິດຫຼັກຊັບ ແລະ ລະບຽບການອື່ນທີ່ກ່ຽວຂ້ອງ. ກໍລະນີ, ມີຂໍ້ຜິດພາດເກີດຂຶ້ນອັນເນື່ອງມາຈາກການປະຕິບັດບໍ່ສອດຄ່ອງຕາມຫຼັກຈັນຍາບັນ, ສິດ, ໜ້າທີ່ ແລະ ຂໍ້ຫ້າມ ຂອງ ຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ບໍລິສັດຫຼັກຊັບ ທີ່ມີຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຕ້ອງລາຍງານຕໍ່ ສຄຄຊ ທັນທີ.

6. ບໍລິສັດຫຼັກຊັບ ທີ່ມີຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຕ້ອງສ້າງລະບຽບ ຫຼື ບົດແນະນຳ ເພື່ອເປັນບ່ອນອີງໃນການປະຕິບັດເພື່ອໃຫ້ສອດຄ່ອງຕາມຫຼັກຈັນຍາບັນ, ສິດ, ໜ້າທີ່ ແລະ ຂໍ້ຫ້າມ ຂອງ ນາຍໜ້າຊື້ ຂາຍຫຼັກຊັບ ແລະ ຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ. ພ້ອມທັງເຜີຍແຜ່ໃຫ້ພວກກ່ຽວຮັບຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.
7. ບໍລິສັດຫຼັກຊັບ ທີ່ມີຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຕ້ອງນຳສົ່ງ ລະບຽບ ຫຼື ບົດແນະນຳ, ລາຍຊື່ນາຍໜ້າຊື້ ຂາຍຫຼັກຊັບ ແລະ ລາຍຊື່ຜູ້ຊ່ວຍນາຍໜ້າຊື້ ຂາຍຫຼັກຊັບ ຕາມທີ່ໄດ້ກຳນົດໄວ້ໃນ ຂໍ້ 6 ຂອງແຈ້ງການສະບັບນີ້ ໃຫ້ແກ່ ສຄຄຊ ເພື່ອຊາບ. ກໍລະນີທີ່ມີການ ປັບປຸງ ຫຼື ປ່ຽນແປງ ກໍຕ້ອງແຈ້ງໃຫ້ ສຄຄຊ ຊາບທັນທີ.
8. ນອກຈາກເນື້ອໃນຕ່າງໆຕາມ ທີ່ໄດ້ກຳນົດໄວ້ໃນ ຂໍ້ 1 ຫາ ຂໍ້ 7 ຂອງແຈ້ງການສະບັບນີ້ ຫາກເຫັນວ່າມີຄວາມຈຳເປັນ ແມ່ນ ສຄຄຊ ຈະອອກແຈ້ງການເພີ່ມເຕີມ ເປັນແຕ່ລະກໍລະນີ.

ດັ່ງນັ້ນ, ຈຶ່ງໄດ້ແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນຂ້າງເທິງໃຫ້ໄດ້ຮັບຜົນດີ.

**ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ**

ຄະນະກຳມະການຄຸ້ມຄອງຫຼັກຊັບ ★ ສຳນັກງານ ຄຄ

ສາຍສະໝອນ ຈັນທະຈັກ